ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ: 21 /ຫກ

ານັກງານ ຄຄຊ
ເລກທີ.0503
ວັນທີ.27.MAY.2019
ະສັບ 021 217770

ນະຄອນຫຼວງວຽງຈັນ, ວັນທີ: 23 ພຶດສະພາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 06-10/05/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,71% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດອາເມຣິກາອອກມາບໍ່ດີ ເຫັນໄດ້ຈາກດຸນການຄ້າໃນເດືອນມີນາ 2019 ຢູ່ທີ່ລະດັບ 50,00 ຕື້ໂດລາ ເພີ່ມຂຶ້ນຈາກ ຂາດດຸນ 49,30 ຕື້ໂດລາໃນເດືອນທີ່ຜ່ານມາ. ພ້ອມນັ້ນ, ກະຊວງແຮງງານຍັງໄດ້ລາຍງານວ່າ: ປະຊາຊົນທີ່ຂໍສະຫວັດດີການຫວ່າງງານຕໍ່ເນື່ອງໃນອາທິດທີ່ 27/04/2019 ມີຈຳນວນ 1,67 ລ້ານຄົນ ເພີ່ມຂຶ້ນຈາກຈຳນວນ 1,68 ລ້ານຄົນໃນອາທິດທີ່ຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/04-03/05/2019 | ອາທິດນີ້ 06-10/05/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1156 | 1,1236 | -0,71% |
| ເຢນ/ໂດລາ | 111,48 | 109,86 | 1,47% |
| ບາດ/ໂດລາ | 32,050 | 31,610 | 1,39% |
| ເປໂຊ/ໂດລາ | 51,89 | 52,26 | -0,70% |
| ຣູເປັຍ/ໂດລາ | 14.260,00 | 14.330,00 | -0,49% |
| ໂດລາສິງກະໂປ/ໂດລາ | 1,3641 | 1,3628 | 0,10% |
| ຢວນ/ໂດລາ | 6,7355 | 6,8180 | -1,21% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 0,05% ເປັນ 61,95 ໂດລາ/ບາເຣວ ເນື່ອງຈາກການຄວ້ຳບາດຂອງ ສ. ອາເມລິກາຕໍ່ປະເທດອີຫຼ່ານ ແລະ ຊາອຸດີອາຣະເບຍໄດ້ຮັດກຸມຂຶ້ນເຮັດໃຫ້ປະລິມານການສົ່ງອອກນ້ຳມັນດິບຫຼຸດລົງມາຢູ່ທີ່ລະດັບຕ່ຳກວ່າ 1,00 ລ້ານບາເຣວ/ວັນ ທຽບໃສ່ປີຜ່ານມາ ແລະ ຄາດຄະເນວ່າຈະຫຼຸດລົງມາຢູ່ທີ່ລະດັບ 500.000 ບາເຣວ/ວັນ ໃນເດືອນ 05/2019;
- ລາຄາຄຳ ເພີ່ມຂຶ້ນ 1,12% ເປັນ 1.285,35 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,12% ແຕ່ອ່ອນຄ່າລົງ 0,86% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,25% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,76% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 29/04-03/05/2019 | | | ອາທິດນີ້ 6-10/05/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.720,65 | 8.743,90 | 8.733,32 | 8.714,22 | 8.741,54 | 8.723,25 | 0,07% | 0,03% | 0,12% | -1,29% | -1,30% | -1,25% |
| ບາດ | 274,00 | 276,03 | 275,05 | 276,81 | 277,88 | 277,44 | -1,01% | -0,67% | -0,86% | -3,83% | -3,75% | -3,76% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,60% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,88%;
- ປະລິມານເງິນ M2 ຫຼຸດລົງ 0,39% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,92%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (03-09/05/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 1,04 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 28,89 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 27,85 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 274,60 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 165,81 ລ້ານບາດ ແລະ ຂາຍເງິນບາດໄດ້ 440,41 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 20,50% ແລະ ເງິນບາດຫຼຸດລົງ 14,16%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມ ໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 5,00 ລ້ານໂດລາ ແລະ ຂາຍເງິນບາດສຸດທິຈຳນວນ 15,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,49 ລ້ານໂດລາ ແລະ ເງິນບາດ ຈຳນວນ 33,90 ລ້ານບາດ;

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ແມ່ນບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດທີ 26/04-02/5/2019 | | ອາທິດນີ້ 03/05-09/5/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **48,42** | **116,44** | **28.89** | **165.81** | **-40.33%** | **42.40%** |
| - ທ/ຄທຸລະກິດລັດ | 8,97 | 44,31 | 10.96 | 45.95 | 22.19% | 3.70% |
| - ທ/ຄທຸລະກິດອື່ນໆ | 39,45 | 72,13 | 17.93 | 119.86 | -54.55% | 66.17% |
| **2. ການຂາຍເງິນຕາຕ່າງປະເທດ** | **22,95** | **589,81** | **27.85** | **440.41** | **21.35%** | **-25.33%** |
| - ທ/ຄທຸລະກິດລັດ | 10,35 | 139,09 | 8.34 | 230.59 | -19.42% | 65.78% |
| - ທ/ຄທຸລະກິດອື່ນໆ | 12,60 | 450,72 | 19.51 | 209.82 | 54.84% | -53.45% |
| **ຊື້-ຂາຍສຸດທິ ທທກ** | **25,47** | **-473,37** | **1.04** | **-274.60** | **-95.92%** | **-41.99%** |
| - ຜົດດ່ຽງຊື້-ຂາຍ | 52,60% | -406,54% | 3.60% | -165.61% | -93.16% | -59.26% |
| **- ມູນຄ່າການຊື້-ຂາຍ** | **71,37** | **706,25** | **56.74** | **606.22** | **-20.50%** | **-14.16%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-2,81** | **0,00** | **-5.00** | **-15.00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 2,81 | 0,00 | 5.00 | 15.00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **3,93** | **59,37** | **0.49** | **33.90** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0.00** | **0.00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0.00 | 0.00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0.00 | 0.00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 05/2019 ຄາດວ່າຈະຢູ່ໃນລະດັບ 2,09%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 47,71 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (03-09/05/2019) ກະແສເງິນໄຫຼອອກມີ ຈຳນວນ 121,22 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ແລະ ບໍລິການ ຈຳນວນ 98,18ລ້ານໂດລາສະຫະລັດ, ໂອນຊຳລະດອກເບັ້ຍ ແລະ ໂອນລາຍໄດ້ ຈຳນວນ 17,13 ລ້ານໂດລາສະຫະລັດ ແລະ ລັດຖະບານຊຳລະເງິນກູ້ຢືມຕ່າງປະເທດ ຈຳນວນ 5,77 ລ້ານໂດລາສະຫະລັດ). ກະແສເງິນໄຫຼເຂົ້າມີຈຳນວນ 73,51 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 55,24 ລ້ານໂດລາສະຫະລັດ, ຮັບລາຍໄດ້ຈາກການເຮັດວຽກຢູ່ຕ່າງປະເທດ ຈຳນວນ 11,83 ລ້ານໂດລາສະຫະລັດ ແລະ ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດຈຳນວນ 5,14 ລ້ານໂດລາສະຫະລັດ)

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 466 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 95 ສະບັບ, ລວມມູນຄ່າໂອນທັງໝົດ 331,48 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 112,64 ຕື້ກີບເທົ່າກັບ 51,47%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (03-09/5/2019) ມີທັງໝົດ 4.618 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ເພີ່ມຂຶ້ນ ຈຳນວນ 1.026 ຕື້ກີບຈາກ 972,02 ຕື້ກີບ ມາເປັນ 1.997,64 ຕື້ກີບ ເທົ່າກັບ 105,51%. ໃນນັ້ນ, ກະຊວງການເງິນມີການໂອນເງິນ

ຈຳນວນ 117 ຄັ້ງ, ມູນຄ່າການໂອນເພີ່ມຂຶ້ນຈຳນວນ 144,08 ຕື້ກີບ ຈາກ 11,69 ຕື້ກີບ ມາເປັນ 155,77 ຕື້ກີບ ຫຼື ເທົ່າກັບ 1.232,38%.

**4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 789,24 ຈຸດ ເພີ່ມຂຶ້ນ ຈາກ 787,22 ຈຸດ ຫຼື ເທົ່າກັບ 0,25% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 171.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 729,90 ລ້ານກີບ ເພີ່ມຂຶ້ນ 20,96% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 77,03% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ SVN ແລະ LAT.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ (26/4-02/05/2019) | | | ອາທິດນີ້ (03-09/05/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 94.400 | 528.990.000 | 5.700 | 49.600 | 279.465.000 | 5.700 | -47,46 | -47,17 | - |
| **EDL-GEN** | 18.100 | 70.130.000 | 3.800 | 108.500 | 412.018.000 | 3.800 | 499,45 | 487,51 | - |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | - | - | 1.000 | 100 | 100.000 | 1.000 | - | - | - |
| **SVN** | - | - | 2.100 | 1.000 | 2.200.000 | 2.200 | - | - | 4,76 |
| **PCD** | - | - | 1.010 | - | - | 1.010 | - | - | - |
| **LCC** | 2.000 | 4.000.000 | 2.000 | 1.000 | 2.200.000 | 2.200 | -50 | -45 | 10,00 |
| **MHTL** | 100 | 299.000 | 2.980 | 11.600 | 33.921.000 | 2.950 | 11.500 | 11.244,82 | -1,01 |
| **LAT** | - | - | 725 | - | - | 730 | - | - | 0,69 |
| ທັງໝົດ | 114.600 | 603.419.000 | | 171.800 | 729.904.000 | | 49,91 | 20,96 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມກະກຽມເນື້ອໃນເຂົ້າຜ່ານກອງປະຊຸມຄະນະບໍລິຫານງານສູນກາງພັກຄັ້ງທີ 8 ສະໄໝທີ X; ❷ກອງປະຊຸມຮ່ວມລະຫວ່າງລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3 ຢູ່ປະເທດ ຟີຈີ; ❸ກອງປະຊຸມປຶກສາຫາລືກ່ຽວກັບຮູບແບບລະບົບການຊຳລະເງິນຜ່ານທາງລະບົບອອນລາຍ (Online Payment);
- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົກອ້ອມຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມພົບປະ ແລະ ເຮັດວຽກຮ່ວມກັບຄະນະກຳມະການຮ່ວມມືລາວ-ຈີນ; ❷ກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການການເງິນຈຸລະພາກການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃນເຂດຊົນນະບົດ (MRA-AFP) ໄລຍະທີ 4 ແລະ ເປີດໂຄງການ (MRA-AFP) ໄລຍະທີ 5; ❸ກອງປະຊຸມຄົ້ນຄວ້າປັບປຸງສັນຍາຮ່ວມທຶນ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບ ສ. ເກົາຫຼີ (JVA); ❹ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ກົດໝາຍວ່າດ້ວຍລະບົບຊຳລະສະສາງໃຫ້ແກ່ຄູ ແລະ ນັກສຶກສາສະຖາບັນ

ທະນາຄານ; ❺ກອງປະຊຸມຄົ້ນຄວ້າກ່ຽວກັບການພັດທະນາຕະຫຼາດພັນທະບັດ; ❻ກອງປະຊຸມຄົ້ນຄວ້າປຶກສາຫາລື ກ່ຽວກັບວຽກງານການສົ່ງເສີມການຮ່ວມມືລະຫວ່າງ ທຫລ ແລະ ອົງການ World Economic Forum; ❼ພິທີ ປະກາດການຈັດຕັ້ງ ແລະ ສະຫຼຸບການເຄື່ອນ ໄຫວວຽກງານຂອງສາຂາ ທຫລ ພາກກາງທີ່ແຂວງສະຫວັນນະເຂດ ປະຈຳ ໄຕມາດ I ປີ 2019; ❽ພິທີມອບ-ຮັບໜ້າທີ່ວ່າການຫົວໜ້າສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ແລະ ❾ພິທີມອບ-ຮັບ ອາຄານສຳນັກງານ ຄຄຊ ຫຼັງໃໝ່;

- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ** ❶ ທ່ານ Eteri Kvintradze ຫົວໜ້າຄະນະທີມງານປະເມີນສະພາບ ເສດຖະກິດລາວ ພ້ອມດ້ວຍຄະນະທີ່ມາປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ປະຈຳປີ 2019 ແລະ ❷ກຸ່ມ ທະນາຄານອົດສະຕຼາລີ ແລະ ນິວຊີແລນ ຈຳກັດ ສາຂາລາວ;
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ສຳເລັດການລົງກວດກາສະຖາບັນການເງິນຈຸລະ ພາກ 3 ແຫ່ງ ປະຈາປີ 2018 ແລະ ❷ ອະນຸມັດຮັບຮອງໃຫ້ 1 ບໍລິສັດເປັນບໍລິສັດປະເມີນມູນຄ່າຊັບສິນໃນວຽກງານ ຫຼັກຊັບ.

**III.** <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບ ເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາ ຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນ ເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນ ຕົ້ນ:** ❶ກອງປະຊຸມສ່ອງແສງອ້ອມຂ້າງລັດຖະບານປະຈຳເດືອນພຶດສະພາ 2019; ❷ກອງປະຊຸມຮັບຟັງການເຜີຍແຜ່, ແນະນຳກ່ຽວກັບການກະກຽມ-ດຳເນີນກອງປະຊຸມໃຫຍ່ຂອງພັກຂັ້ນຕ່າງໆ; ❸ກອງປະຊຸມສຳມະນາພາຍໃຕ້ຫົວຂໍ້: "2019 Asian Regional Public Debt Management Forum" ທີ່ປະເທດອາເຊີໄບຈັນ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມຄົ້ນຄວ້າກ່ຽວກັບວຽກງານສຳນັກງານ ປົກປ້ອງເງິນຝາກ; ❷ກອງປະຊຸມຄະນະຊີ້ນຳລວມວຽກງານພັນທະບັດລັດຖະບານ; ❸ກອງປະຊຸມຄະນະຮ່າງແຜນຍຸດ ທະສາດການເຂົ້າເຖິງບໍລິການທາງດ້ານການເງິນ; ❹ກອງປະຊຸມເຜີຍແຜ່ຄົ້ນຄວ້າວຽກງານລະບົບການຊຳລະສະສາງ; ❺ ກອງປະຊຸມຄົ້ນຄວ້າຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ; ❻ກອງປະຊຸມຄົ້ນຄວ້າປຶກ ສາຫາລືກ່ຽວກັບຮ່າງຍຸດທະນສາດການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ໄລຍະ 08 (2018-2025) ແລະ ❼ພິທີປະກາດການຈັດຕັ້ງຢູ່ສາຂາ ທຫລ ພາກເໜືອທີ່ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ.
- **ທຫລ ກະກຽມການເຂົ້າຢ້ຽມຂໍ່ານັບ**ຈາກຄະນະຊ່ຽວຊານຈາກກຸ່ມທະນາຄານໂລກ.

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ພູມມະລີ ສີຣິພົນເດດ**